# ບົດລາຍງານປະຈຳໄຕມາດ 3
# ສິ້ນສຸດວັນທີ 30 ກັນຍາ 2022




ບໍລິສັດ ສວັນນີ ໂຮມເຊັນເຕີ ມະຫາຊົນ

Souvanny Home Center Public Company

PHONTONGSAVAT RD, PHONTONG VILLAGE, CHANTHABULY DISTRICT, VIENTIANE CAPITAL

OFFICE; (856 21) 415645, FAX; (856 21) 262984, WWW.SOUVANNY.LA

# ສາລະບານ

**I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ…………………………………………………….…2**
1. ວິໄສທັດ…..……………………………………………………………………….2
2. ພາລະກິດ…………………………………………………………………….……..2
3. ປະຫວັດຄວາມເປັນມາຂອງ ສຸວັນນີ…………………………………...……..…......2-4
**II. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ………...……..…..…………………..4-5**
**III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ…………………………...………........5-6**
**IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2022…………………………………….………....6**
**V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການແລະການເຄື່ອນໄຫວຂອງສະພາບໍລິຫານ…………………………………………………………………………..…6**
1. ໂຄງຮ່າງການຈັດຕັ້ງພາຍໃນຂອງບໍລິສັດ……………..………………………………......6
2. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ……………………………..7
2.1 ສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ …………..………………………7
2.2 ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ……….………………………………..…..7-13
2.3 ຄະນະຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ…………………..….....…14
3. ການເຄື່ອນໄຫວຂອງສະພາບໍລິຫານ………………………………………………………15
4. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ…………………………...15
**VI. ຄວາມຮັບຜິດຊອບຕໍ່ສັງຄົມ…………………………………………………………......15-16**
1. ການມອບພັນທະອາກອນ…………………………………………...…………………15-16
2. ການອຸປະຖຳ ແລະ ການຊ່ວຍເຫຼືອສັງຄົມ…………………………………………………...16-20
**VII. ນະໂຍບາຍກ່ຽວກັບການຄວບຄຸມພາຍໃນ ……………………………………….…..….21**
**VIII. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ ……………………….………...….21**

# I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ.

## 1. ວິໄສທັດ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະເປັນຜູ້ນຳການພັດທະນາ ການຄ້າວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ທີ່ທັນສະໄໝໃນທຸກຊ່ອງທາງການຂາຍ ເພື່ອຕອບສະໜອງລູກຄ້າທຸກລະດັບໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ.

## 2. ພາລະກິດ

- ພັດທະນາການນຳເອົາສິນຄ້າດ້ານວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ຈາກທຸກຂົງເຂດ ທີ່ມີຄຸນນະພາບ, ລາຄາຍຸດຕິທຳໄປສູ່ທຸກກຸ່ມລູກຄ້າ ແລະ ທຸກພື້ນທີ່ຂອງປະເທດລາວ, ປະກອບສ່ວນເປັນອົງປະກອບໜຶ່ງ ທີ່ຂັບເຄື່ອນເສດຖະກິດລາວ.
- ພັດທະນາການບໍລິການ ແລະ ການສົ່ງມອບ ໃນທຸກຊ່ອງທາງການຂາຍທັງອອບລາຍ ແລະ ອອນລາຍ ໃຫ້ທັນສະໄໝ.
- ເສີມສ້າງຄວາມສາມາດ ຂອງບຸກຄະລາກອນ ແລະ ພະນັກງານສືບທອດຢ່າງຕໍ່ເນື່ອງ ເພື່ອໃຫ້ມີສັກກະຍະພາບສາມາດຮັບມືກັບການປ່ຽນແປງ ຂອງເທັກໂນໂລຢີໃໝ່ໃນໄລຍະປ່ຽນຜ່ານ ແລະ ພຶດຕິກຳ ຂອງຜູ້ບໍລິໂພກໃນຍຸກໃໝ່.
- ພັດທະນາການເຊື່ອມໂຍງການຄ້າ ຂອງລາວໃຫ້ຕິດພັນກັບການຄ້າ ຂອງອາຊຽນ ແລະ ໂລກ, ໃນຖານະທີ່ປະເທດລາວເປັນໃຈກາງຂອງພາກພື້ນ.
- ຮັກສາທຸກຜົນປະໂຫຍດ ຂອງທຸກພາກສ່ວນ ທີ່ມີສ່ວນໄດ້ສ່ວນເສຍກັບບໍລິສັດ ພ້ອມກັບປະກອບສ່ວນຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເພື່ອພັດທະນາຕາມທິດສີຂຽວຍືນຍົງ.

## 3. ປະຫວັດຄວາມເປັນມາຂອງ ສຸວັນນີ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນ ເຊັ່ນ: ກະໂລ້, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງບ້ານ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ລວມທັງການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າ ເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ. ສິນຄ້າສ່ວນຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີຄຸນນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ໂດຍມີລະບົບໂປຣແກຣມຄອມພິວເຕີທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນຫຼາຍກວ່າ 20 ໝວດຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົບແຕ່ງອາຄານ ພາຍໃຕ້ຄຳຂວັນທີ່ວ່າ: **"ຍົກລະດັບສິນຄ້າ ແລະ ບໍລິການໃຫ້ມີຄຸນະພາບ ສົ່ງມອບຖືກຕ້ອງ ຄົບຖ້ວນ ທັນເວລາ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ"**. ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍ

ໃນສູນສະແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ “ສຸວັນນີ” (Souvanny) ທີ່ເປັນຜູ້ນຳໃນການຄ້າວັດສະດຸກໍ່ສ້າງທີ່ໃຫຍ່ໃນ ສປປ ລາວ.

ຮ້ານ ສຸວັນນີການຄ້າ ໄດ້ເລີ່ມສ້າງຕັ້ງຂຶ້ນໃນປີ **1988** ໂດຍ ທ່ານ ນາງ ສຸວັນນີ ສຸຄະບັນດິດ, ທ່ານ ວັດດາ ນາ ສຸຄະບັນດິດ ແລະ ທ່ານ ພັນໂນລາ ສຸຄະບັນດິດ ທີ່ ບ້ານ ສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ (ສາຂາທົ່ງຂັນຄຳ) ດ້ວຍທຶນຈົດທະບຽນເບື້ອງຕົ້ນ **3.250.000** ກີບ. ໃນປີ **1993** ບໍລິສັດ ຈຶ່ງໄດ້ມີການຈົດທະບຽນເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ດ້ວຍທຶນ ຈົດທະບຽນ **100.000.000** ກີບ. ໃນປີ **2000** ທຸລະກິດຂອງບໍລິສັດໄດ້ຮັບການຕອບສະໜອງທີ່ດີຂຶ້ນ ແລະ ໄດ້ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ , ປະກອບກັບ ທ່ານ ກິດສະດາ ສຸຄະບັນດິດ ໄດ້ສຳເລັດການ ສຶກສາຈາກຕ່າງປະເທດ ແລະ ກໍ່ໄດ້ເຂົ້າມາມີບົດບາດໃນການບໍລິຫານທຸລະກິດໃຫ້ມີຄວາມເຂັ້ມແຂງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດ ”ສາຂາໂພນຕ້ອງ” ຂຶ້ນ ເພື່ອຈັດຈຳໜ່າຍ ວັດສະດຸກໍ່ສ້າງ, ຕົບແຕ່ງ, ສ້ອມແປງ ບ້ານ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າທີ່ທັນສະໄໝເປັນຮ້ານທຳອິດຂອງ ສປປ ລາວ ແລະ ມີການຍ້າຍສຳນັກງານໃຫຍ່ຈາກ ສາຂາທົ່ງຂັນຄຳ ມາເປັນ ສາຂາໂພນຕ້ອງ (ສຳນັກງານໃຫຍ່ໃນ ປັດຈຸບັນ). ໃນປີ **2004** ບໍລິສັດ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາສີໄຄ ທີ່ບ້ານ ນາ ແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໃນປີ **2015** ບໍລິສັດ ໄດ້ປ່ຽນຮູບແບບວິສາຫະກິດ ຈາກ ບໍລິສັດ ສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ມາເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດ, ດ້ວຍທຶນຈົດທະບຽນ **500.000.000** ກີບ. ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2015 ວັນທີ **28 ກໍລະກົດ 2015** ທີ່ໄດ້ມີວາລະພິຈາລະນາປັບປຸງມູນຄ່າທີ່ກຳນົດຮຸ້ນຂອງບໍລິສັດ ຈາກເດີມ 50.000 ກີບຕໍ່ຮຸ້ນ ເປັນ 2.000 ກີບຕໍ່ຮຸ້ນ, ພິຈາລະນາເລື່ອງການເພີ່ມທຶນຂອງບໍລິສັດ ຈາກ ເດີມ 500.000.000 ກີບ ເປັນ 280 ຕື້ກີບ ໂດຍມີຈຳນວນຮຸ້ນທັງໝົດ 140.000.000 ຮຸ້ນ, ບໍລິສັດ ໄດ້ ມີການຮ່ວມລົງທຶນກັບ ບໍລິສັດ ໂກບອນ ອິນເຕີເນຊັນແນວ ຈຳກັດ ເຊິ່ງເປັນຜູ້ປະກອບການຈັດຈຳໜ່າຍ ວັດສະດຸກໍ່ສ້າງ ແລະ ຕົບແຕ່ງອາຄານແບບຄົບວົງຈອນໃນປະເທດໄທ ໂດຍການຮ່ວມລົງທຶນດັ່ງກ່າວຍັງ ເປັນການຖ່າຍທອດຄວາມຮູ້ໃນການດຳເນີນທຸລະກິດ (Know-how) ແລະ ເສີມສ້າງສັກກະຍະພາບໃນ ການແຂ່ງຂັນທາງທຸລະກິດຂອງບໍລິສັດໃນໄລຍະຍາວ ໂດຍຄອບຄົວສຸຄະບັນດິດຖືຮຸ້ນ 60% ແລະ ບໍລິສັດໂກບອນອິນເຕີເນຊັນແນວຖືຮຸ້ນ 40%. ໃນວັນທີ **13 ກັນຍາ 2015** ບໍລິສັດໄດ້ມີການປະຊຸມ ວິສາມັນຜູ້ຖືຮຸ້ນຄັ້ງທີ 3/2015 ໂດຍມີວາລະທີ່ສຳຄັນ ຄື: ການແປສະພາບເປັນບໍລິສັດມະຫາຊົນ ແລະ ໄດ້ປ່ຽນຊື່ ເປັນ “ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ” ພ້ອມກັບໄດ້ເພີ່ມທຶນຈົດທະບຽນເພື່ອຮອງ ຮັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 50 ຕື້ກີບ ໂດຍ ອອກຮຸ້ນສາມັນເພີ່ມທຶນຈຳນວນ 25.000.000 ຮຸ້ນ, ມູນຄ່າກຳນົດ (Par Value) 2.000 ກີບຕໍ່ຮຸ້ນ ເພື່ອ ຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນ ການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົບແຕ່ງບ້ານ ແລະ ອາຄານ ແບບຄົບວົງຈອນ ໃນ ສປປ ລາວ. ໃນວັນທີ **11 ທັນວາ 2015** ບໍລິສັດ ສຸວັນນີ ໂຮມ ເຊັນເຕີ ມະຫາຊົນ ໄດ້ນຳຮຸ້ນເຂົ້າແລກປ່ຽນ-ຊື້ຂາຍ ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດ (First Trading Day). ໃນວັນທີ **30 ມັງກອນ 2017** ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍ ສາຂາເພີ່ມອີກ 1 ສາຂາ ຢູ່ພາຍໃນນະຄອນຫຼວງວຽງຈັນຄື: ສາຂາ ໂຊກໃຫຍ່ ເຊິ່ງຕັ້ງຢູ່ເສັ້ນທາງ 450 ປີ ບ້ານ ໂຊກໃຫຍ່ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ. ໃນວັນທີ **30 ກັນຍາ 2017** ບໍລິສັດ ສຸວັນນີ

ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາປາກຊັນ ຢູ່ທີ່ ບ້ານສີສະອາດ ເມືອງປາກຊັນ ແຂວງບໍລິຄຳໄຊ. ໃນວັນທີ **31 ມີນາ 2018** ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການປິດບໍລິການ ສາຂາ ທົ່ງຂັນຄຳ. ໃນວັນທີ **17 ມິຖຸນາ 2018** ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາປາກເຊ ສະຖານທີ່ຕັ້ງຢູ່ ບ້ານ ກາງ ເມືອງ ປາກເຊ ແຂວງ ຈຳປາສັກ. ໃນວັນທີ 1 ກໍລະກົດ 2019 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການປິດບໍລິການ ສາຂາ ທົ່ງຕູມ. ໃນວັນທີ 02 ມີນາ 2020 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມອີກ 1 ສາຂາ ຄື: ສາຂາ ທ່າແຂກ ຢູ່ທີ່ ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ.ໃນວັນທີ 14 ທັນວາ ປີ 2021 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍສາຂາເພີ່ມ ເຊິ່ງເປັນສາຂາທີ 7 ຄື: ສາຂາສະຫວັນນະເຂດ ຕັ້ງຢູ່ ບ້ານ ໂພນສະຫວ່າງເໜືອ, ນະຄອນໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.

## II. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ.

### 1. ລາຍໄດ້

- ລາຍໄດ້ປະຈຳໄຕມາດ 3 ປີ 2022 ເທົ່າກັບ 161.113ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 53.146 ລ້ານກີບ ຫຼື ຄິດເປັນ 49,22% ເພີ່ມຂຶ້ນເນື່ອງຈາກວ່າບໍລິສັດໄດ້ມີການຂະຫຍາຍສາຂາໃຫ່ມຄືສາຂາສະຫວັນນະເຂດ ແລະ ເພີ່ມສິນຄ້າໃໝ່ທີ່ຕົງຕາມຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ.
- ລາຍໄດ້ສະສົມ 9 ເດືອນປີ 2022 ເທົ່າກັບ 470.703 ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 139.352 ລ້ານກີບ ຫຼື ຄິດເປັນ 42,06 % ເພີ່ມຂຶ້ນເນື່ອງຈາກວ່າບໍລິສັດໄດ້ມີການຂະຫຍາຍສາຂາໃຫ່ມຄືສາຂາສະຫວັນນະເຂດ ແລະ ເພີ່ມສິນຄ້າໃໝ່ທີ່ຕົງຕາມຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ.

### 2. ລາຍຈ່າຍ

- ລາຍຈ່າຍປະຈຳໄຕມາດ 3 ປີ 2022 ເທົ່າກັບ 27.336 ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 9.390 ລ້ານກີບ ຫຼື ຄິດເປັນ 52,33% ເພີ່ມຂຶ້ນເນື່ອງຈາກມີລາຍຈ່າຍໃນການຂາຍ ແລະ ການບໍລິຫານເພີ່ມຂຶ້ນ ແລະ ສ່ວນໜຶ່ງແມ່ນເພີ່ມຈາກລາຍການສົ່ງເສີມການຂາຍ.
- ລາຍຈ່າຍສະສົມ 9 ເດືອນປີ 2022 ເທົ່າກັບ 72.332 ລ້ານກີບ ເມື່ອປຽບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເຫັນວ່າເພີ່ມຂຶ້ນ 18.998 ລ້ານກີບ ຫຼື ຄິດເປັນ 35,62% ເພີ່ມຂຶ້ນຈາກລາຍຈ່າຍໃນການບໍລິຫານຂອງບໍລິສັດ ແລະ ຍັງມີຊັບສິນຖາວອນທີ່ເພີ່ມຂຶ້ນຕາມການຂະຫຍາຍສາຂາຈຶ່ງສົ່ງຜົນໃຫ້ມີຄ່າຫຼຸ້ຍຫ້ຽນຂອງຊັບສິນເພີ່ມຂຶ້ນມາຕາມລຳດັບ.

3. **ກຳໄລ/ຂາດທຶນ:**
   - ກຳໄລສຸດທິປະຈຳ ໄຕມາດ 3 ປີ 2022 ເທົ່າກັບ 9.923 ລ້ານກີບ.
   - ກຳໄລສຸດທິສະສົມ 9 ເດືອນ ປີ 2022 ເທົ່າກັບ 44.552 ລ້ານກີບ.

4. **ຊັບສິນ:** ມີຊັບສິນລວມສິ້ນສຸດ ວັນທີ 30 ກັນຍາ ປີ 2022 ເທົ່າກັບ 1.287.450 ລ້ານກີບ ເມື່ອປຽບທຽບໃສ່ ວັນທີ 31 ທັນວາ 2021 ເຫັນວ່າເພີ່ມຂຶ້ນ 337.806 ລ້ານກີບ ຫຼື ຄິດເປັນ 35,57% ເພີ່ມຂຶ້ນ ເນື່ອງຈາກວ່າບໍລິສັດໄດ້ມີການເພີ່ມເຄື່ອງໃນສາງຂອງສາຂາໃໝ່, ມີຊັບສິນໝູນວຽນອື່ນໆເພີ່ມຈາກການຈ່າຍຄ່າໃຊ້ຈ່າຍໆລ່ວງໜ້າ, ມີຊັບສິນບໍ່ໝູນວຽນເພີ່ມຂຶ້ນຈາກການຂະຫຍາຍສາຂາໃໝ່ສາຂາສະຫວັນນະເຂດ ແລະ ສ່ວນໜຶ່ງແມ່ນເພີ່ມຈາກອັດຕາແລກປ່ຽນຈາກການແປງຄ່າເອກະສານລາຍງານການເງິນຈຶ່ງເຮັດໃຫ້ຊັບສິນຂອງບໍລິສັດເພີ່ມຂຶ້ນ.

5. **ໜີ້ສິນ:** ມີໜີ້ສິນລວມສິ້ນສຸດ ວັນທີ 30 ກັນຍາ 2022 ເທົ່າກັບ 234.456 ລ້ານກີບ ເມື່ອປຽບທຽບໃສ່ ວັນທີ 31 ທັນວາ 2021 ເຫັນວ່າເພີ່ມຂຶ້ນ 44.531 ລ້ານກີບ ຫຼື ຄິດເປັນ 23,45% ເພີ່ມຂຶ້ນ ເນື່ອງຈາກວ່າ ບໍລິສັດມີການກູ້ເງິນເພື່ອນຳໃຊ້ເຂົ້າໃນການຂະຫຍາຍກິດຈະການຂອງບໍລິສັດເພີ່ມຂຶ້ນ.

6. **ທຶນ:** ມີທຶນຕົນເອງລວມສິ້ນສຸດ ວັນທີ 30 ກັນຍາ 2022 ເທົ່າກັບ 1.052.994 ລ້ານກີບ ເມື່ອປຽບທຽບໃສ່ ວັນທີ 31 ທັນວາ 2021 ເຫັນວ່າເພີ່ມຂຶ້ນ 293.274 ລ້ານກີບ ຫຼື ຄິດເປັນ 38,60% ເນື່ອງຈາກວ່າບໍລິສັດມີກຳໄລເພີ່ມຂຶ້ນ ແລະ ອັດຕາແລກປ່ຽນຈາກການແປງຄ່າເອກະສານລາຍງານການເງິນ ທີ່ເພີ່ມຂຶ້ນ.

   **ໝາຍເຫດ:** ສຳລັບຕົວເລກ ຜົນການດຳເນີນງານແມ່ນ ອີງຕາມເອກະສານລາຍງານການເງິນ.

## III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ

### 1. ທີ່ຕັ້ງ ແລະ ເຄືອຂ່າຍ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ມີ ສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ເຊິ່ງໃນປັດຈຸບັນ ມີ 7 ສາຂາ ໃນນັ້ນຢູ່ນະຄອນຫຼວງວຽງຈັນມີ 3 ສາຂາ ແລະ ອີກ 4 ສາຂາ ຢູ່ຕ່າງແຂວງ ໄດ້ແກ່:

1. **ສາຂາໂພນຕ້ອງ ຕັ້ງຢູ່:** ເລກທີ 366, ຖະໜົນໂພນຕ້ອງ, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.
   ເບີໂທ 021 560000 / 020 56082311
2. **ສາຂາສີໄຄ ຕັ້ງຢູ່:** ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

ເບີໂທ 021 621254 / 020 58842414

**3.** ສາຂາໂຊກໃຫຍ່ ຕັ້ງຢູ່: ຖະໜົນ 450, ບ້ານ ໂຊກໃຫຍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.
ເບີໂທ 021 466009 / 020 55112509

**4.** ສາຂາ ປາກຊັນ ຕັ້ງຢູ່: ຖະໜົນເລກທີ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ.
ເບີໂທ 054 791026 / 020 58097558

**5.** ສາຂາ ປາກເຊ ຕັ້ງຢູ່: ບ້ານ ກາງ, ເມືອງ ປາກເຊ, ແຂວງ ຈຳປາສັກ.
ເບີໂທ 031 514091 / 020 56206753

**6.** ສາຂາທ່າແຂກ ຕັ້ງຢູ່: ບ້ານ ໂພນພິມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ.
ເບີໂທ 051 212353 / 020 94071293

**7.** ສາຂາສະຫວັນນະເຂດ ຕັ້ງຢູ່: ຖະໜົນເລກ 9, ບ້ານ ໂພນສະຫວ່າງເໜືອ, ນະຄອນໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ ເບີໂທ 041 215858

## 2. ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.

- ເບີໂທ: (+856-21) 415645 / 021 561111
- ແຟັກ: (+856-21) 262984
- ອີເມວ: Souvanny@souvanny.la
- ເວັບໄຊ: www.souvanny.la

# IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2022

➢ **ທຶນຈົດທະບຽນ**

ບໍລິສັດມີທຶນຈົດທະບຽນທັງໝົດນະວັນທີ 30 ກັນຍາ ປີ 2022 ແມ່ນ 330.000.000.000 ກີບ ເປັນຮຸ້ນສາມັນຈຳນວນ 165.000.000 ຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ.

➢ **ຜູ້ຖືຮຸ້ນ**

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງບໍລິສັດ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ໄດ້ແກ່:

1. ຄອບຄົວສຸຄະບັນດິດ ຈຳນວນຮຸ້ນທີ່ຖືຄອງແມ່ນ 83.893.600 ຮຸ້ນເທົ່າກັບ 51 ສ່ວນຮ້ອຍ.
2. ບໍລິສັດ ໂກບອນເຮົ້າ ອິນເຕີເນຊັນແນວ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 56.000.000 ຮຸ້ນເທົ່າກັບ 34 ສ່ວນຮ້ອຍ.

# V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະການເຄື່ອນໄຫວຂອງສະພາບໍລິຫານ.

## 1. ໂຄງຮ່າງການຈັດຕັ້ງພາຍໃນຂອງບໍລິສັດ




### 2.1 ສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປະກອບມີທັງໝົດ 9 ທ່ານຄື:

| | | |
|---|---|---|
| 1. | ທ່ານ ສົມຈິດ ອິນທະມິດ | ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ |
| 2. | ທ່ານ ປອ ໄຊພອນ ກອງມະນີລາ | ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ |
| 3. | ທ່ານ ວັດດານາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ |
| 4. | ທ່ານ ບຸນເຕີມ ກົມມິດຕະພາບ | ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ |
| 5. | ທ່ານ ນາງ ຄຳໄຂ ລໍວັນໄຊ | ສະມາຊິກສະພາບໍລິຫານ |
| 6. | ທ່ານ ພິພົບ ວາດສະໜາອາຊາສະກຸນ | ສະມາຊິກສະພາບໍລິຫານ |
| 7. | ທ່ານ ນາງ ຊູຕິການ ສີແສງຈັນ | ສະມາຊິກສະພາບໍລິຫານ |
| 8. | ທ່ານ ພັນໂນລາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ |
| 9. | ທ່ານ ກິດສະດາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ |

## 2.2 ປະຫວັດຫຍໍ້ຂອງສະມາຊິກສະພາບໍລິຫານ.

### 1. ທ່ານ ສົມຈິດ ອິນທະມິດ



**ວັນເດືອນປີເກີດ** 13/03/1960

**ສັນຊາດ** ລາວ

**ວຸດການສຶກສາ** ປະລິນຍາໂທ ດ້ານ ເສດຖະສາດ ພັດທະນາ, ມະຫາວິທະຍາໄລ ມາກຕິນ ລູເທີ ຮານເລ ວິດເຕິນແບກ, ປະເທດ ເຢຍລະມັນ.

**ຕຳແໜ່ງງານໃນປະຈຸບັນ** ປະທານສະພາບໍລິຫານ ແລະ ສະມາຊິກອິດສະຫຼະ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

**ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022**

- ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ
- ກອງປະຊຸມສະພາບໍລິຫານ 3 ຄັ້ງ
- ກອງປະຊຸມຄະນະກຳມະການຄັດເລືອກ 1 ຄັ້ງ.
- ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ.

### 2. ທ່ານ ປອ ໄຊພອນ ກອງມະນີລາ



**ວັນເດືອນປີເກີດ** 30/12/1973

**ສັນຊາດ** ລາວ

**ວຸດການສຶກສາ** ປະລິນຍາເອກ ບໍລິຫານທຸລະກິດ ມະຫາວິທະຍາໄລ ຮິໂຣຊິມ່າ ປະເທດຍີ່ປຸ່ນ.

| | |
|---|---|
| **ຕໍາແໜ່ງງານໃນປະຈຸບັນ** | ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ ແລະ ປະທານຄະນະກໍາມະການກວດສອບພາຍໃນ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ<br>- ກອງປະຊຸມສະພາບໍລິຫານ 3 ຄັ້ງ.<br>- ກອງປະຊຸມຄະນະກໍາມະການກວດສອບ 3 ຄັ້ງ. |

**3. ທ່ານ ວັດດານາ ສຸຄະຂັນດິດ**



| | |
|---|---|
| **ວັນເດືອນປີເກີດ** | 28/10/1966 |
| **ສັນຊາດ** | ລາວ |
| **ວຸດການສຶກສາ** | ປະລິນຍາໂທ ບໍລິຫານທຸລະກິດ, ມະຫາວິທະຍາໄລມະຫາສາຣະຄາມ, ປະເທດໄທ |
| **ຕໍາແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.<br>ຜູ້ອໍານວຍການໃຫຍ່ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ<br>- ກອງປະຊຸມສະພາບໍລິຫານ 3 ຄັ້ງ.<br>- ກອງປະຊຸມຄະນະກໍາມະການກວດສອບ 3 ຄັ້ງ.<br>- ກອງປະຊຸມຄະນະກໍາມະການຄັດເລືອກ 2 ຄັ້ງ.<br>- ກອງປະຊຸມຄະນະກໍາມະການກໍານົດຄ່າຕອບແທນ 2 ຄັ້ງ.<br>- ກອງປະຊຸມຄະນະກໍາມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ. |

## 4. ທ່ານ ບຸນເຕີມ ກິມມິດຕະພາບ



| | |
|---|---|
| **ວັນເດືອນປີເກີດ** | 03/03/1955 |
| **ສັນຊາດ** | ລາວ |
| **ວຸດການສຶກສາ** | ປະລິນຍາຕີ ດ້ານກົດໝາຍຍຸດຕິທໍາ ຈາກ ຄະນະນິຕິສາດ-ລັດຖະສາດ ມະຫາວິທະຍາໄລແຫ່ງຊາດລາວ |
| **ຕໍາແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ ແລະ ປະທານຄະນະກໍາມະການກໍານົດຄ່າຕອບແທນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ.<br>- ກອງປະຊຸມສະພາບໍລິຫານ 3 ຄັ້ງ.<br>- ກອງປະຊຸມຄະນະກໍາມະການກໍານົດຄ່າຕອບແທນ 2 ຄັ້ງ.<br>- ກອງປະຊຸມຄະນະກໍາມະການຄັດເລືອກ 1 ຄັ້ງ. |

## 5. ທ່ານ ນາງ ຄໍາໄຂ ລໍວັນໄຊ



| | |
|---|---|
| **ວັນເດືອນປີເກີດ** | 21/08/1978 |
| **ສັນຊາດ** | ລາວ |
| **ວຸດການສຶກສາ** | ປະລິນຍາຕີ ບໍລິຫານທຸລະກິດ, ວິທະຍາໄລ ເສດຖາບໍລິຫານທຸລະກິດ, ປະເທດລາວ |

| | |
|---|---|
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ.<br>- ກອງປະຊຸມສະພາບໍລິຫານ 3 ຄັ້ງ. |

**6. ທ່ານ ພິພົບ ອາດສະໜາອາຊາສະກຸນ**



| | |
|---|---|
| **ວັນເດືອນປີເກີດ** | 21/05/1970 |
| **ສັນຊາດ** | ໄທ |
| **ວຸດການສຶກສາ** | ປະລິນຍາຕີ ມະນຸດສາດ ມະຫາວິທະຍາໄລກະເສດສາດ. |
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.<br>ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ<br>Siam Global House PCL. |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ.<br>- ກອງປະຊຸມສະພາບໍລິຫານ 3 ຄັ້ງ. |

**7. ທ່ານ ນາງ ຊູຕິການ ສີແສງຈັນ**



| | |
|---|---|
| **ວັນເດືອນປີເກີດ** | 25/04/1969 |
| **ສັນຊາດ** | ໄທ |
| **ວຸດການສຶກສາ** | ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ |
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີ ແລະ ການເງິນ Siam Global House PCL. |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ.<br>- ກອງປະຊຸມສະພາບໍລິຫານ 3 ຄັ້ງ. |

**8. ທ່ານ ພັນໂນລາ ສຸຄະບັນດິດ**



| | |
|---|---|
| **ວັນເດືອນປີເກີດ** | 22/09/1969 |
| **ສັນຊາດ** | ລາວ |
| **ວຸດການສຶກສາ** | ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລ ມະຫາສາລະຄາມ ປະເທດໄທ |

| | |
|---|---|
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.<br>ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍການເງິນ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ<br>- ກອງປະຊຸມສະພາບໍລິຫານ 3 ຄັ້ງ.<br>- ກອງປະຊຸມຄະນະກຳມະການກວດສອບ 3 ຄັ້ງ.<br>- ກອງປະຊຸມຄະນະກຳມະການຄັດເລືອກ 2 ຄັ້ງ.<br>- ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ 2 ຄັ້ງ.<br>- ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ. |

## 9. ທ່ານ ກິດສະດາ ສຸຄະບັນດິດ



| | |
|---|---|
| **ວັນເດືອນປີເກີດ** | 04/01/1972 |
| **ສັນຊາດ** | ລາວ |
| **ວຸດການສຶກສາ** | ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລ ຂອນແກ່ນ ປະເທດໄທ |
| **ຕຳແໜ່ງງານໃນປະຈຸບັນ** | ສະມາຊິກສະພາບໍລິຫານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.<br>ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການຝ່າຍປະຕິບັດການ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ. |
| **ການເຂົ້າຮ່ວມກອງປະຊຸມຕ່າງໆ ໃນປີ 2022** | - ກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ<br>- ກອງປະຊຸມສະພາບໍລິຫານ 2 ຄັ້ງ<br>- ກອງປະຊຸມຄະນະກຳມະການກວດສອບ 3 ຄັ້ງ.<br>- ກອງປະຊຸມຄະນະກຳມະການຄັດເລືອກ 2 ຄັ້ງ.<br>- ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ 2 ຄັ້ງ.<br>- ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ 1 ຄັ້ງ. |

**2.3 ຄະນະຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.**

**1. ທ່ານ ອັດດານາ ສຸຄະບັນດິດ**



ຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

**2. ທ່ານ ພັນໂນລາ ສຸຄະບັນດິດ**



ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການ ຝ່າຍການເງິນ.

**3. ທ່ານ ກິດສະດາ ສຸຄະບັນດິດ**



ຮອງຜູ້ອຳນວຍການໃຫຍ່ ຜູ້ອຳນວຍການ ຝ່າຍປະຕິບັດການ.

### 3. ການເຄື່ອນໄຫວຂອງສະພາບໍລິຫານ.

- ບໍລິສັດໄດ້ມີການຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021 ຂຶ້ນ 1 ຄັ້ງ.
- ສະພາບໍລິຫານ ໄດ້ມີການຈັດກອງປະຊຸມສະພາບໍລິຫານຈຳນວນ 3 ຄັ້ງ.
- ຄະນະກຳມະການກວດສອບພາຍໃນ ໄດ້ມີການຈັດກອງປະຊຸມ ຈຳນວນ 3 ຄັ້ງ.
- ຄະນະກຳມະການກຳນົດຄ່າຕອບແທນ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ.
- ຄະນະກຳມະການຄັດເລືອກ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ.
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ມີການຈັດກອງປະຊຸມ ຈຳນວນ 1 ຄັ້ງ.

### 4. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ

ສຳລັບສະມາຊິກສະພາບໍລິຫານສະເພາະທີ່ເປັນສະມາຊິກອິດສະຫຼະ ຈະມີຄ່າຕອບແທນເປັນເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງໂດຍແບ່ງອອກຄື:

- ປະທານສະພາບໍລິຫານ: 6.500.000ກີບ/ຄັ້ງ
- ຮອງປະທານສະພາບໍລິຫານ: 4.300.000 ກີບ/ຄັ້ງ
- ສະມາຊິກສະພາບໍລິຫານ: 4.300.000 ກີບ/ຄັ້ງ

## VI. ຄວາມຮັບຜິດຊອບຕໍ່ສັງຄົມ.

### 1. ການມອບພັນທະອາກອນ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປລາວ ໂດຍສະເພາະກົດໝາຍສ່ວຍສາອາກອນຢ່າງເຂັ້ມງວດເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ, ອາກອນກຳໄລ ເປັນຕົ້ນ.

**ການມອບພັນທະອາກອນໃຫ້ລັດປະຈຳໄຕມາດ 3 ປີ 2022**

| ລຳດັບ | ລາຍການ | ລວມມູນຄ່າ (ກີບ) 2022 | ລວມມູນຄ່າ (ກີບ) 2021 |
|---|---|---|---|
| 1 | ພາສີນຳເຂົ້າ | 366.449.172 | 678.023.785 |
| 2 | ອາກອນມູນຄ່າເພີ່ມ | 11.069.822.811 | 10.937.253.303 |
| 3 | ອາກອນເງິນເດືອນ | 479.171.445 | 272.388.203 |
| 4 | ອາກອນຊົມໃຊ້ | - | - |
| 5 | ອາກອນກຳໄລ | - | 2.000.000 |
| | **ລວມ** | **11.915.443.428** | **11.889.665.291** |

**ການມອບພັນທະອາກອນໃຫ້ລັດ 9 ເດືອນສະສົມ ປີ 2022**

| ລຳດັບ | ລາຍການ | ລວມມູນຄ່າ (ກີບ) 2022 | ລວມມູນຄ່າ (ກີບ) 2021 |
|---|---|---|---|
| 1 | ພາສີນຳເຂົ້າ | 1.874.387.445 | 1.779.469.846 |
| 2 | ອາກອນມູນຄ່າເພີ່ມ | 32.357.684.584 | 33.562.572.778 |
| 3 | ອາກອນເງິນເດືອນ | 1.198.184.351 | 689.223.251 |
| 4 | ອາກອນຊົມໃຊ້ | 2.545.500 | - |
| 5 | ອາກອນກຳໄລ | 10.000.000 | 2.000.000 |
| | **ລວມ** | **35.442.801.880** | **36.033.265.874** |

## 2. ການອຸປະຖຳ ແລະ ການຊ່ວຍເຫຼືອສັງຄົມ.

ບໍລິສັດໄດ້ຊ່ວຍເຫຼືອສັງຄົມຄື:

- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮ່ວມໃຈ ບໍລິຈາກເລືອດໃຫ້ແກ່ອົງການກາແດງລາວເພື່ອເປັນການຊ່ວຍເຫຼືອສັງຄົມ ແລະ ປຸກລະດົມການບໍລິຈາກເລືອດ.



- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສາຂາປາກເຊ ຕາງໜ້າມອບອຸປະກອນ ການຮຽນ-ການສອນ ປະເພດຄອມພິວເຕີ ຈຳນວນ 3 ໜ່ວຍ ເປັນ ມູນຄ່າ 10.800.000 ກີບ ໃຫ້ແກ່ ໂຮງຮຽນ ມ.ຕ ສົງ ວັດບຸຣີມະນາຖວາປີ ແຂວງສາລະວັນ ຕາງໜ້າຮັບໂດຍ ພຣະອາຈານ ຄຳເປ ຈັນທະຈອນ ເຈົ້າອາວາດວັດບຸຣີມະນາຖວາປີ ແລະ ກຳມາທິການເມືອງວາປີ ແຂວງສາລະວັນ.




- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຂົ້າມອບ ອຸປະກອນກໍ່ສ້າງປະເພດ ກະໂລ້ ແລະ ພັດລົມ ໃຫ້ແກ່ໂຮງຮຽນປະຖົມສົມບູນ ບ້ານ ທົ່ງຫວ່ານ ເມືອງ ປາກຊັນ ແຂວງ ບໍລິຄຳໄຊ ລວມມູນຄ່າ 12.000.000 ກີບ ຕາງໜ້າຮັບ ໂດຍ ທ່ານ ລຽນ ນາຍບ້ານບ້ານ ທົ່ງຫວ່ານ ເມືອງ ປາກຊັນ ແຂວງ ບໍລິຄຳໄຊ.



- ໃນວັນທີ 2/8/2022 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊິນ ເຂົ້າມອບ ອຸປະກອນກໍ່ສ້າງປະເພດ ຊີມັງ, ກະໂລ້ ແລະ ສີໃຫ້ຫ້ອງການບ້ານໂພນສະຫວ່າງເໜືອ ນະຄອນໄກສອນພົມວິຫານ ແຂວງ ສະຫວັນນະເຂດ ລວມມູນຄ່າ 6.800.000 ກີບ ຕ່າງໜ້າຮັບ ໂດຍ ຄະນະປົກຄອງບ້ານ ບ້ານໂພນ ສະຫວ່າງເໜືອ.




- ໃນວັນທີ 2/8/2022 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊິນ ເຂົ້າມອບ ອຸປະກອນກໍ່ສ້າງປະເພດ ສຸຂະພັນຫ້ອງນ້ຳ ໃຫ້ດ່ານມິດຕະພາບສາກົນ 3 ທ່າແຂກນະຄອນພະນົມ ລວມມູນຄ່າ 8.000.000 ກີບ ເພື່ອສ້ອມແຊມຫ້ອງນ້ຳສາທາລະນະ ຕາງໜ້າຮັບໂດຍທ່ານ ພົມມາ ເດດຊຸນຟອງ ຫົວໜ້າດ່ານ ສາກົນເຂດ 3.



- ໃນວັນທີ 19 ກໍລະກົດ 2022 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມອບເງິນສະໜັບສະໜູນ ໃຫ້ ”ທີມນັກກິລາເຕະບານຊາຍ U-19 ຈາກການແຂ່ງຂັນ ຊິງຊະນະເລີດອາຊຽນ ຮຸ່ນອາຍຸບໍ່ເກີນ 19 ປີ ແລະ ຄູຝຶກທຸກໆທ່ານ ທີ່ ພັດຕະຄານ ເຊັນພິລາ ລວມມູນຄ່າ 50.000.000 ກີບ.




- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມອບກະໂລ້ໃຫ້ຫ້ອງການບ້ານໂພນຕ້ອງສະຫວາດ ລວມມູນຄ່າ 4.500.000 ກີບ ຕາງໜ້າມອບໂດຍ ທ່ານ ສົມມາລີ ອຸ່ນແກ້ວຈັນທະລາ ຜູ້ຈັດການ ສາຂາໂພນຕ້ອງ ແລະ ຕາງໜ້າຮັບໂດຍ ນາຍບ້ານບ້ານໂພນຕ້ອງສະຫວາດພ້ອມດ້ວຍຄະນະ.



- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມອບອຸປະກອນການຮຽນ-ການສອນ, ອຸປະກອນກິລາ ແລະ ດອກໄຟໂຊລາເຊວໃຫ້ແກ່ໂຮງຮຽນ 3 ບ້ານໄດ້ແກ່ ບ້ານແກ້ງຕາປາ, ບ້ານສີມບໍ ແລະ ບ້ານໜອງກະປາດ ເມືອງ ບົວລະພາ ແຂວງ ຄຳມ່ວນ ລວມມູນຄ່າ 23.000.000 ກີບ ເຂົ້າຮ່ວມມອບຢ່າງເປັນທາງການໂດຍ ທ່ານ ສຸບພະເສດ ວາຊິຣະພິນໂຍພົງ ຕາງໜ້າຜູ້ບໍລິຫານ ແລະ ທ່ານ ຄຳສຸກ ສຸວັນນະດາລາ ຜູ້ຈັດການສາຂາ ທ່າແຂກ ພ້ອມດ້ວຍພະນັກງານບໍລິສັດເຂົ້າຮ່ວມຢ່າງພ້ອມພຽງ.



- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຖວາຍວັດສະດຸກໍ່ສ້າງ ໃຫ້ ວັດສີລິວິເວດບ້ານຫ້ວຍເຕີຍ ເມືອງປາກຊ່ອງ ແຂວງຈຳປາສັກ ລວມມູນຄ່າ 25.500.000 ກີບ.



## VII. ນະໂຍບາຍກ່ຽວກັບການຄວບຄຸມພາຍໃນ

ບໍລິສັດ ມີນະໂຍບາຍໃນການຄຸ້ມຄອງພາຍໃນ ໂດຍໃຊ້ມາດຕະຖານການບໍລິຫານຈັດການພາຍໃຕ້ລະບົບ ISO 9001 Version 2015 ແລະ ຍັງຄວບຄຸມດ້ວຍມາດຕະຖານຮ້ານ ແລະ ມາດຕະຖານການບໍລິການຕ່າງໆ ພ້ອມນີ້ ກໍ່ມີການຄວບຄຸມ ໂດຍລະບົບຄອມພິວເຕີ ນຳໃຊ້ Software ທີ່ມີປະສິດທິພາບ ເພື່ອການຄຸ້ມຄອງ, ມີການຂໍອະນຸມັດ ຕາມຂັ້ນຕອນຂອງລະບົບ ພາຍໃຕ້ການກວດສອບ ຂອງທີມງານກວດສອບພາຍໃນ ແລະ ທີມງານກວດສອບພາຍນອກ ພ້ອມເສີມດ້ວຍລະບົບກ້ອງວົງຈອນປິດ ເພື່ອກວດກາຄວບຄຸມຈຸດບົກຜ່ອງຕ່າງໆ.

## VIII. ນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ

ທຸລະກິດການຄ້າວັດສະດຸກໍ່ສ້າງໃນລາວມີປັດໄຈຄວາມສ່ຽງຫຼັກໃນປີຜ່ານມາຄື:

1. ພາລະໜີ້ສິນ ຂອງລູກຄ້າ
2. ອັດຕາແລກປ່ຽນ
3. ພາວະໂລກລະບາດ
4. ໄພຕ່າງໆ

ເຊິ່ງພວກເຮົາໄດ້ ບໍລິຫານຄວາມສ່ຽງຕ່າງໆ ໂດຍໃຊ້ກົນໄກການອະນຸມັດຕ່າງໆ ມີການພິຈາລະນາ ແລະ ກຳນົດວົງເງິນໃຫ້ບໍລິສັດ ແລະ ລູກຄ້າທາງດ້ານອັດຕາແລກປ່ຽນແມ່ນ ເນື່ອງຈາກ ບໍລິສັດນຳເຂົ້າ ໂດຍຖືກຕ້ອງຕາມກົດໝາຍ ຈຶ່ງສາມາດຊື້ເງິນຕາຈາກທະນາຄານໄດ້, ດ້ວຍພາວະໂລກລະບາດ ແມ່ນມີມາດຕະການທາງລະບົບການຂາຍ online ແລະ ທາງ offline ແມ່ນມີມາດຕະຖານຮັກສາໄລຍະຫ່າງ ຂອງລູກຄ້າ ໃສ່ໜ້າກາກ ,ວັດແທກອຸນນະພູມ ແລະ ມີເຢວລ້າງມື ທຸກຄັ້ງກ່ອນ ແລະ ຫລັງບໍລິການ ແລະ ດ້ານໄພຕ່າງໆເຊັ່ນ: ນ້ຳຖ້ວມ , ໄຟໄໝ້, ພາຍຸ ແລະ ແຜ່ນດິນໄຫວເຫຼົ່ານີ້ເປັນຕົ້ນ ພວກເຮົາໄດ້ມີການຊື້ປະກັນໄພໄວ້ໃນແຕ່ລະສາຂາ ເພື່ອຮອງຮັບທຸກສະຖານະການ ທີ່ຈະເກີດຂຶ້ນ.

**ຜູ້ອຳນວຍການໃຫຍ່**

**ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ**

ອຸດສາຫະກຳ ແລະ ການຄ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

**ທ່ານ ອັດດານາ ສຸຄະບັນດິດ**